# ລາຍງານການແລກປ່ຽນຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ
# (ປະຈຳປີ 2015)

## I. ສະພາບການ ຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບຢູ່ຕ່າງປະເທດ

ດັດຊະນີຕະຫຼາດຫຼັກຊັບຕ່າງປະເທດທ້າຍປີ 2015 ທຽບກັບທ້າຍປີ 2014 ປັບຕົວຫຼຸດລົງຫຼາຍຕະຫຼາດ ດັ່ງນີ້:

ດັດຊະນີຕະຫຼາດຫຼັກຊັບ ສ. ອາເມລິກາ ດັດຊະນີ Dow Jones ປັບຕົວຫຼຸດລົງ -1,65% ແລະ S&P500 -0,42% ຍົກເວັ້ນ NASDAQ ປັບຕົວເພີ່ມຂຶ້ນ 6,50%. ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນ ສ.ອາເມລິກາ ປັບຕົວຫຼຸດລົງເນື່ອງຈາກການເປີດເຜີຍຂໍ້ມູນ ກ່ຽວກັບ ການຈ້າງວຽກພາກເອກະຊົນມີພຽງ 185.000 ຕຳແໜ່ງ ຊຶ່ງຕ່ຳກວ່າທີ່ນັກວິເຄາະໄດ້ຄາດການໄວ້ຄື 215.000 ຕຳແໜ່ງ, ກະຊວງອຸດສາຫະກຳການຄ້າ ໄດ້ເປີດເຜີຍວ່າ ສ.ອາເມລິກາ ໄດ້ຂາດດຸນການຄ້າເພີ່ມຂຶ້ນ 7,1% ສູ່ລະດັບ 43,84 ຕື້ໂດລາສະຫະລັດ, ທ່ານ ນາງ ເຈເນັດ ເຍລເລັນ ປະທານທະນາຄານກາງ ສ.ອາເມລິກາ ໄດ້ເນັ້ນຕໍ່ການຖະແຫຼງນະໂຍບາຍການເງິນຮອບເຄິ່ງປີວ່າ ທະນາຄານກາງມີແນວໂນ້ມທີ່ຈະປັບອັດຕາດອກເບ້ຍຂຶ້ນໃນປີນີ້, ຈາກຄວາມກັງວົນຂອງຜູ້ການລົງທຶນຕໍ່ກັບການບໍ່ຂະຫຍາຍຕົວຂອງເສດຖະກິດໂລກ ລວມເຖິງເສດຖະກິດ ສປ.ຈີນ ແລະ ສ.ອາເມລິກາ ສົ່ງຜົນໃຫ້ເກີດການເທຂາຍຂອງຕະຫຼາດຮຸ້ນທົ່ວໂລກ.

ດັດຊະນີຕະຫຼາດຫຼັກຊັບ ເອີຣົບ ມີທ່າອ່ຽງປັບຕົວເພີ່ມຂຶ້ນໂດຍ: ດັດຊະນີ Eurofirst 300 ປັບຕົວເພີ່ມຂຶ້ນ 5,98%, ເຢຍລະມັນ (DAX) 13,26%, ແລະ ຝຣັ່ງ (CAC 40) 8,74% ຍົກເວັ້ນລຸກຊາບວກ (LUXXX) ປັບຕົວຫຼຸດລົງ -8,79% ແລະ ອັງກິດ (FTSE 100) -6,54%. ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນເອີຣົບ ປັບຕົວເພີ່ມຂຶ້ນ ເນື່ອງຈາກທະນາຄານກາງເອີຣົບ (ECB) ຕັດສິນໃຈປັບເພດານການປ່ອຍເງິນກູ້ສຸກເສີນ ສຳລັບພາກທະນາຄານຂອງເກຼັກ ເປັນ 68,30 ຕື້ຢູໂຣ ຈາກລະດັບ 65 ຕື້ຢູໂຣ ຫຼັງຈາກທີ່ວົງເງິນເດີມໄດ້ໝົດອາຍຸ ໃນວັນທີ 18 ກຸມພາ 2015 ແລະ ໄດ້ຊື້ພັນທະບັດຂອງລັດຖະບານໃນກຸ່ມປະເທດເອີຣົບ (Eurozone) ເປັນຈຳນວນເງິນ 9,751 ພັນລ້ານເອີຣົບ ການຊື້ພັນທະບັດດັ່ງກ່າວ ຊ່ວຍໃຫ້ຄ່າໃຊ້ຈ່າຍໃນການກູ້ຢືມຂອງລັດຖະບານຫຼຸດລົງ ແລະ ເຮັດໃຫ້ອັດຕາດອກເບ້ຍຕ່ຳລົງ ຊຶ່ງເຮັດໃຫ້ຜູ້ລົງທຶນຫັນມາຊື້ຊັບສິນທີ່ມີຄວາມສ່ຽງ ຊ່ວຍໃນການກະຕຸ້ນການຂະຫຍາຍຕົວຂອງເສດຖະກິດ ພ້ອມນັ້ນ, ຜົນສຳຫຼວດຂອງມາຣກິດ ໄດ້ລາຍງານວ່າ ດັດຊະນີຜູ້ຈັດການຊື້ພາກບໍລິການຂອງ ເອີຣົບ ແລະ ບັນດາປະເທດທີ່ມີເສດຖະກິດໃຫຍ່ໃນເອີຣົບຕ່າງປັບຕົວເພີ່ມຂຶ້ນຈາກເດືອນຜ່ານມາໃນປະເທດ ເຢຍລະມັນ ແລະ ຝຣັ່ງ ເຊິ່ງສົ່ງຜົນໃຫ້ຜູ້ລົງທຶນຫຼຸດຄວາມກັງວົນຕໍ່ສະຖານນະການເສດຖະກິດຂອງຂົງເຂດດັ່ງກ່າວ ລວມທັງຜູ້ລົງທຶນໄດ້ຫຼຸດຜ່ອນຄວາມກັງວົນຕໍ່ສະຖານນະການ ການກໍ່ການຮ້າຍໃນປະເທດຝຣັ່ງ ຈາກປັດໃຈດັ່ງກ່າວຈຶ່ງສົ່ງຜົນໃຫ້ດັດສະນີຕະຫຼາດຫຼັກຊັບໃນເອີຣົບປັບຕົວເພີ່ມຂຶ້ນ.

ດັດຊະນີຕະຫຼາດຫຼັກຊັບອາຊີ: ດັດຊະນີຕະຫຼາດຫຼັກຊັບປະເທດໃນກຸ່ມອາຊຽນ ແລະ ອາຊີ ຫຼາຍຕະຫຼາດຕ່າງພາກັນປັບຕົວຫຼຸດລົງເຊັ່ນ: ດັດຊະນີ ASEAN 40 ປັບຕົວຫຼຸດລົງ -23,42%, ຕະຫຼາດຫຼັກຊັບ ສິງກະໂປ (STRAIT TIMES) ປັບຕົວຫຼຸດລົງ -13,05%, ມາເລເຊຍ (FBMLCI) -7,23%, ຟີລິປິນ (PCOMP) -4,36%, ສສ. ຫວຽດນາມ (HOCHIMIN) -2,40%, (HANOI) -11,58%, ອິນໂດເນເຊຍ (JCI) -10,43%, ໄທ (SET) -17,89%, ກຳປູເຈຍ (CSX) -16,19%. ໄຕ້ຫວັນ (TWSE) -8,16%, ຮ່ອງກົງ (HANGSENG) -6,15% ແລະ ອົດສະຕາລີ (S&P/ASX200) -0,49%. ຍົກເວັ້ນ ຕະຫຼາດຫຼັກຊັບ ຍີ່ປຸ່ນ (NIKKEI) ປັບຕົວເພີ່ມຂຶ້ນ 10,79%, ເກົາຫຼີໃຕ້ (KOSPI) 0,17%, ສປ. ຈີນ (SHENZHEN) 71,72%, ສປ. ຈີນ (SHANGHAI) 44,30%. ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນອາຊີປັບຕົວຫຼຸດລົງເນື່ອງຈາກ ສະພາບບັນຍາກາດການລົງທຶນໃນຕະຫຼາດຕ່າງປະເທດທີ່ສົ່ງສັນຍານຖົດຖອຍລົງຢ່າງຕໍ່ເນື່ອງ ກາຍເປັນແຮງກົດດັນໃຫ້ຕະຫຼາດຫຼັກຊັບໃນອາຊີໃຫ້ເກີດ

ຄວາມລະມັດລະວັງເພີ່ມຂຶ້ນ ແລະ ການລາຍງານຜົນສຳຫຼວດຄວາມຄິດເຫັນ ຂອງບັນດາຜູ້ນຳທຸລະກິດທີ່ເຂົ້າຮ່ວມປະຊຸມຄວາມຮ່ວມມືທາງເສດຖະກິດອາຊີ-ປາຊີຟິກຂອງ ບໍລິສັດ ໄພວໍເຕີ້ເຮົາກຸບເປີ້ (PWC) ທີ່ລະບຸວ່າ ກຸ່ມຜູ້ລົງທຶນມີຄວາມເຊື່ອໝັ້ນຫຼຸດລົງຕ່ຳສຸດ ຕໍ່ເສດຖະກິດໃນພາກພື້ນຄືມີພຽງ 28% ທີ່ຍັງຄົງມີຄວາມເຊື່ອໝັ້ນ. ນອກນັ້ນ, ສຳນັກງານ ສະຖິຕິແຫ່ງຊາດຂອງຈີນ (NBS) ໄດ້ເປີດເຜີຍວ່າ ດັດຊະນີຜູ້ຈັດການຝ່າຍການຈັດຊື້ (PMI) ພາກການຜະລິດຂອງຈີນ ໃນເດືອນ ມິຖຸນາ ບໍ່ຂະຫຍາຍຕົວເມື່ອທຽບກັບ ເດືອນ ພຶດສະພາ ແລະ ຄະນະກຳມະການຄຸ້ມຄອງຫຼັກຊັບຂອງ ສປ.ຈີນ (CSRC) ປະກາດຫ້າມບໍ່ໃຫ້ຜູ້ລົງທຶນທີ່ຖືຮຸ້ນຫຼາຍກວ່າ 5% ມີການຊື້-ຂາຍເປັນໄລຍະເວລາ 6 ເດືອນ, ໂຈະການຊື້-ຂາຍຮຸ້ນຂອງບໍລິສັດຢ່າງໜ້ອຍ 1.249 ບໍລິສັດ ຫຼື 43% ຂອງຮຸ້ນທີ່ຈົດທະບຽນທັງໝົດໃນຕະຫຼາດຫຼັກຊັບ ແລະ ຍັງປະກາດເພີ່ມມາດຕະການວາງຫຼັກຊັບຄ້ຳປະກັນ (Margin Requirement) ສຳລັບຄຳສັ່ງຂາຍສັນຍາລ່ວງໜ້າ ໃນດັດຊະນີ CSI 500 ເພື່ອສະກັດກັ້ນການເກັງກຳໄລ.

## II. <u>ສະພາບການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ</u>

ດັດຊະນີຕະຫຼາດຫຼັກຊັບລາວກໍມີທ່າອ່ຽງຫຼຸດລົງເຊັ່ນດຽວກັບຕະຫຼາດຫຼັກຊັບໃນອາຊຽນ ໃນທ້າຍປີ 2015 ປິດຢູ່ທີ່ 1.173,63 ຈຸດ ຫຼຸດລົງ 240,56 ຈຸດ ຫຼື -17,01% ເມື່ອທຽບໃສ່ດັດຊະນີທ້າຍປີ 2014, ໂດຍມີມູນຄ່າການຊື້-ຂາຍທັງໝົດ 200,19 ຕື້ກີບ ເພີ່ມຂຶ້ນ 28,07% ຈາກ 156,31 ຕື້ກີບ ແລະ ມີຈຳນວນຮຸ້ນຊື້-ຂາຍທັງໝົດ 31,25 ລ້ານຮຸ້ນ ເພີ່ມຂຶ້ນ 16,44% ເມື່ອທຽບໃສ່ປີທີ່ຜ່ານມາ (ສະເລ່ຍ 810,52 ລ້ານກີບ/ມື້ ແລະ 126.558 ຮຸ້ນ/ມື້). ໂດຍມີມູນຄ່າການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 60,42% ຂອງມູນຄ່າການຊື້-ຂາຍທັງໝົດ. ສະພາບການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ ໃນປີ 2015 ເຫັນວ່າບໍ່ຄຶກຄື້ນເທົ່າທີ່ຄວນ ເຖິງວ່າຈະມີຮຸ້ນເຂົ້າຈົດທະບຽນໃໝ່ໃນທ້າຍປີ 2014 ຄື ບໍລິສັດປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ແລະ ອີກໜຶ່ງບໍລິສັດຄື ສຸວັນນີໂຮມເຊັນເຕີ ມະຫາຊົນ (SVN) ທີ່ເຂົ້າຈົດທະບຽນ ແລະ ເລີ່ມການຊື້ຂາຍໃນວັນທີ 11 ທັນວາ 2015 ກໍ່ຕາມ ແຕ່ສືບເນື່ອງຈາກການປັບຕົວລົງຂອງລາຄາຮຸ້ນຫຼັກທັງ ທະນາຄານການຄ້າ ຕ່າງປະເທດລາວ ມະຫາຊົນ (BCEL) ແລະ ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ໃນຊ່ວງກາງປີ 2015ທີ່ອາດເກີດຈາກຜົນການດຳເນີນທຸລະກິດທີ່ຫຼຸດລົງ ໄດ້ສົ່ງຜົນໃຫ້ດັດຊະນີຕະຫຼາດຫຼັກຊັບລາວ ປັບຕົວລົງຫຼາຍເມື່ອທຽບກັບປີກ່ອນ.

ຮຸ້ນຂອງທະນາຄານການຄ້າ ຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 6.173 ກີບ ຫຼຸດລົງ 1.654 ກີບ. ຕະຫຼອດປີ 2015 ມີລາຄາສູງສຸດຢູ່ທີ່ 7.500 ກີບ ແລະ ຕ່ຳສຸດ 4.900 ກີບ, ມີປະລິມານຊື້-ຂາຍທັງໝົດ 3,35 ລ້ານຮຸ້ນ ແລະ ມີມູນຄ່າການ ຊື້-ຂາຍ 20,73 ຕື້ກີບ ຫຼຸດລົງ 7,40% ເມື່ອທຽບໃສ່ປີ 2014 (ສະເລ່ຍ 83,96 ລ້ານກີບ/ມື້), ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 44,86% ຂອງມູນຄ່າການຊື້-ຂາຍທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 9,75%[1]

ລາຄາຮຸ້ນຂອງບໍລິສັດຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 6.865 ກີບ ເພີ່ມຂຶ້ນ 253 ກີບ. ຕະຫຼອດປີ 2015 ມີລາຄາສູງສຸດຢູ່ທີ່ 8.100 ກີບ ແລະ ຕ່ຳສຸດ 5.500 ກີບ, ມີປະລິມານຊື້-ຂາຍທັງໝົດ 23,94 ລ້ານຮຸ້ນແລະ ມີມູນຄ່າຊື້-ຂາຍ 164,36 ຕື້ກີບ ເພີ່ມຂຶ້ນ 71,79% ເມື່ອທຽບໃສ່ປີ 2014 (ສະເລ່ຍ 665,44 ລ້ານກີບ/ມື້). ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດ ກວມເອົາ 58,70% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,83%[2].

ຮຸ້ນຂອງບໍລິສັດລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 7.956 ກີບ ຫຼຸດລົງ 1.896 ກີບ. ຕະຫຼອດປີ 2015 ມີລາຄາສູງສຸດຢູ່ທີ່ 10.000 ກີບ ແລະ ຕ່ຳສຸດ 7.300 ກີບ, ມີປະລິມານຊື້-ຂາຍທັງໝົດ 42.200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 335,72 ລ້ານກີບ (ສະເລ່ຍ 1,35 ລ້ານກີບ/ມື້). ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນ

---

[1]ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[2]ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

ຕ່າງປະເທດ ກວມເອົາ 39,30% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ LWPC ທັງໝົດ. ສັດສ່ວນການຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77%[3].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 3.929 ກີບ ຫຼຸດລົງ 181 ກີບ.ຕະຫຼອດປີ 2015 ມີລາຄາສູງສຸດຢູ່ທີ່ 4.200 ກີບ ແລະ ຕໍ່າສຸດ 2.550 ກີບ ແລະ ມີປະລິມານຊື້-ຂາຍທັງໝົດ 3,60 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 13,74 ຕື້ກີບ (ສະເລ່ຍ 57,28 ລ້ານກີບ/ມື້). ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດ ກວມເອົາ 45,47% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນການຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,68%[4].

ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ໄດ້ເຂົ້າຊື້-ຂາຍໃນຕະຫຼາດຫຼັກຊັບລາວເປັນເດືອນທຳອິດ ໃນວັນທີ 11 ທັນວາ 2015 ມີລາຄາຊື້-ຂາຍສະເລ່ຍ 3.260 ກີບ ຕະຫຼອດປີ 2015 ມີລາຄາສູງສຸດຢູ່ທີ່ 3.300 ກີບ ແລະ ຕໍ່າສຸດ 3.250 ກີບ ແລະ ມີປະລິມານຊື້-ຂາຍທັງໝົດ 309.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1 ຕື້ກີບ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 36,02% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ SVN ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 4,10%[5].

**(ຮອງ) ຫົວໜ້າພະແນກຄຸ້ມຄອງຕະຫຼາດຫຼັກຊັບ**

ທ. ບຸນຈິງ ກອງຄຳ

---

[3]ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[4]ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

[5]ສັດສ່ວນຖືຄອງຮຸ້ນ SVN ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

## ຕາຕະລາງ1: ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)

| | ປີ 2014 | | | ປີ 2015 | | | % ການປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້ຂາຍ (ກີບ) | ລາຄາ ສະເລຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້ຂາຍ (ກີບ) | ລາຄາສະ ເລຍ(ກີບ) | ຈຳນວນ | ມູນຄ່າການຊື້ ຂາຍ | ລາຄາສະ ເລຍ(ກີບ) |
| BCEL | 2.861.675 | 22.398.219.350 | 7.827 | 3.359.891 | 20.739.698.050 | 6.173 | 17,41 | -7,40 | -1.654 |
| EDL-GEN | 14.469.597 | 95.678.910.950 | 6.612 | 23.941.836 | 164.364.783.350 | 6.865 | 65,46 | 71,79 | 253 |
| LWPC | 42.002 | 413.785.000 | 9.852 | 42.200 | 335.722.600 | 7.956 | 0,47 | -18,87 | -1.896 |
| PTL | 9.472.792 | 37.827.921.750 | 3.993 | 3.606.229 | 13.749.026.900 | 3.813 | -61,93 | -63,65 | -181 |
| SVN | 0 | 0 | | 309.600 | 1.009.380.000 | 3.260 | - | - | - |
| ລວມ | 26.846.066 | 156.318.837.050 | | 31.259.756 | 200.198.610.900 | | 16,44 | 28,07 | |

## ແຜນວາດ1: ດັດຊະນີຕະຫຼາດຫຼັກຊັບລາວ
## ( 11 ມັງກອນ 2011 – 28 ທັນວາ 2015 )




## ແຜນວາດ 2 : ການເໜັງຕີງລາຄາຂອງຮຸ້ນ BCEL, EDL-Gen , LWP, PTL ແລະ SVN



### ຕາຕະລາງ 2: ດັດຊະນີຕະຫຼາດຫຼັກຊັບຕ່າງປະເທດ

| ຊື່ດັດສະນີ | ປະເທດ | ດັດຊະນີໃນປີນີ້ | ດັດຊະນີໃນປີກ່ອນ | ປ່ຽນແປງ | |
|---|---|---|---|---|---|
| | | | | +/- | % |
| I. ສະຫະລັດ | | | | | |
| DOW | | 17.425,03 | 17,719 | -293,97 | -1,6591 |
| NASDAQ | | 5.007,41 | 4.701,87 | 305,54 | 6,49827 |
| S&P500 | | 2.043,94 | 2.052,75 | -8,81 | -0,4292 |
| II. ຕະຫຼາດຫຼັກຊັບເອີຣົບ | | | | | |
| Eurofirst 300 | | 1.437,53 | 1.356,38 | 81,15 | 5,98284 |
| DAX | | 10.743,01 | 9.483,97 | 1259,04 | 13,2755 |
| FTSE100 | | 6.242,32 | 6,678,9 | -436,58 | -6,5367 |
| CAC40 | | 4.637,06 | 4.264,21 | 372,85 | 8,74371 |
| LUXXX | | 1.390,716 | 1.524,84 | -134,12 | -8,7959 |
| III. ຕະຫຼາດຫຼັກຊັບອາຊີ | | | | | |
| NIKKEI225 | | 19.033,71 | 17.181,39 | 1.852,32 | 10,781 |
| KOSPI | | 1.961,31 | 1.958,04 | 3,27 | 0,167 |
| HANGSHENG | | 2.1914,40 | 23.349,64 | -1.435,2 | -6,1467 |
| TWSE | | 8.338,06 | 9.078,87 | -740,81 | -8,1597 |
| SHANGHAI | | 3.539,18 | 2.452,66 | 1.086,52 | 44,2997 |
| SHENZHEN | | 2.308,91 | 13.44,57 | 964,337 | 71,7208 |
| S&P/ASX200 | | 5.295,90 | 5.316,24 | -20,34 | -0,3826 |
| IV. ຕະຫຼາດຫຼັກຊັບອາຊຽນ | | | | | |
| ASEAN40 | | 8.418,46 | 10.993,4 | -2.574,9 | -23,423 |
| STRAIT TIME | | 2.882,73 | 3.315,6 | -432,87 | -13,056 |
| SET | | 1.288,02 | 1.568,68 | -280,66 | -17,891 |
| FBMLCI | | 1.692,51 | 1.824,39 | -131,88 | -7,2287 |
| JCI | | 4.593,01 | 5.127,93 | -534,92 | -10,431 |
| PCOMP | | 6.952,08 | 7.268,95 | -316,87 | -4,3592 |
| HOCHIMIN | | 579,03 | 593,32 | -14,29 | -2,4085 |
| HANOI | | 79,96 | 90,43 | -10,47 | -11,578 |
| CSX | | 399,1 | 476,22 | -77,12 | -16,194 |
| LSX | | 1.173,63 | 1.431,58 | -257,95 | -18,019 |
| V. ດັດຊະນີກຸ່ມທະນາຄານ | | | | | |
| NASDAQ BANK | | 2.853,15 | 2.623,27 | 229,88 | 8,76311 |
| SET BANK | | 424,11 | 617,85 | -193,74 | -31,357 |